ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ
ກົມອາຊຽນ

ເລກທີ: 3209 /ອຊ

ນະຄອນຫລວງວຽງຈັນ, ວັນທີ 19 ພະຈິກ 2024

# ໜັງສືແຈ້ງເຊີນການປະມູນຈັດຊື້-ຈັດຈ້າງ

ເຖິງ: ບັນດາບໍລິສັດໂຮງພິມ

ເລື່ອງ: ເຊີນເຂົ້າຮ່ວມຍື່ນຊອງປະມູນຜະລິດປຶ້ມຜົນສຳເລັດການເປັນເຈົ້າພາບ ແລະ ປະທານອາຊຽນ ຂອງ ສປປ ລາວ ໃນປີ 2024 ໂດຍສະເພາະຜົນສຳເລັດການເປັນເຈົ້າພາບ ແລະ ປະທານກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ແລະ ບັນດາກອງປະຊຸມສຸດຍອດທີ່ກ່ຽວຂ້ອງ.

ກົມອາຊຽນ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີອຸປະກອນພຽງພໍ ແລະ ໄດ້ມາດຕະຖານ ແລະ ມີປະສົບປະການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ເຂົ້າຮ່ວມການປະມູນຈັດຊື້-ຈັດຈ້າງ ການຜະລິດປຶ້ມຜົນສຳເລັດການເປັນເຈົ້າພາບ ແລະ ປະທານອາຊຽນຂອງ ສປປ ລາວ ໃນປີ 2024 ໂດຍສະເພາະຜົນສຳເລັດການເປັນເຈົ້າພາບ ແລະ ປະທານກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ແລະ ບັນດາກອງປະຊຸມສຸດຍອດທີ່ກ່ຽວຂ້ອງ.

ການປະມູນຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມອາຊຽນ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 4, ຕຶກ B, ໂທລະສັບ: 021-415109) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 20 ພະຈິກ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມອາຊຽນ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 09:30 ໂມງ ຂອງວັນທີ 29 ພະຈິກ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດ ໃນເວລາ 10:00 ໂມງ ຂອງວັນທີ 29 ພະຈິກ 2024 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 4, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານມາພ້ອມ.

ຫົວໜ້າກົມ

ກະຊວງການຕ່າງປະເທດ
ກົມອາຊຽນ

ຈາຕຸລົງ ບົວສີສະຫວັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 3208 /ອຊ

ນະຄອນຫລວງວຽງຈັນ, 19 ພະຈິກ 2024

## ເງື່ອນໄຂ ແລະ ຄໍາແນະນໍາສໍາລັບຜູ້ເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນຜະລິດປຶ້ມຜົນສໍາເລັດການເປັນເຈົ້າພາບ ແລະ ປະທານອາຊຽນຂອງ ສປປ ລາວ ໃນປີ 2024 ໂດຍສະເພາະຜົນສໍາເລັດການເປັນເຈົ້າພາບ ແລະ ປະທານກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ແລະ ບັນດາກອງປະຊຸມສຸດຍອດທີ່ກ່ຽວຂ້ອງ ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

<u>ເງື່ອນໄຂທົ່ວໄປ</u>

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ;
2. ຕ້ອງມີໃບອະນຸຍາດດໍາເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊໍາລະອາກອນທີ່ໃຊ້ໄດ້ເຖິງສົກປີ 2023 ຫຼື 2022;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ;
5. ຕ້ອງມີໃບຢັ້ງຢືນຖານະທາງການເງິນຂອງບໍລິສັດ 300 ລ້ານກີບ ຂຶ້ນໄປ ພາຍໃນ 01 ປີ. (ຢັ້ງຢືນບັນຊີສໍາຮອງຈາກທະນາຄານ);
6. ຕ້ອງມີໃບຄໍ້າປະກັນດ້ວຍກຣູດ ຫຼື ໃບຄໍ້າປະກັນທະນາຄານ 2% ຂອງມູນຄ່າປະມູນ;
7. ບໍລິສັດຕ້ອງໄດ້ມາດຕະຖານ ແລະ ປະສົບການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ມາກ່ອນ ຢ່າງໜ້ອຍ 02 ປີ;
8. ບໍລິສັດຕ້ອງສະໜອງການຜະລິດປຶ້ມດັ່ງກ່າວ ຈໍານວນ 10,000 ຫົວ ແລະ ຕ້ອງມີເຄື່ອງພ້ອມກ່ອນວັນທີ ກ່ອນວັນທີ 10 ທັນວາ 2024 ຫຼັງຈາກເຊັນສັນຍາ;
9. ຊອງປະມູນຕ້ອງແຍກອອກເປັນ 02 ຊອງ ຄື: 1. ຊອງເຕັກນິກ ແລະ 2 ຊອງລາຄາ (ກາແດງ 01 ຊຸດ ແລະ ກອບປີ້ 01 ຊຸດ);
10. ຕ້ອງເປັນບໍລິສັດທີ່ບໍ່ຖືກດໍາເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກໍານົດເງື່ອນໄຂ ແນະນໍາຜູ່ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.ສ

ຫົວໜ້າກົມ

ກະຊວງການຕ່າງປະເທດ ກົມອາຊຽນ

ຈາຕຸລົງ ບົວສີສະຫວັດ